## ບົດນຳ

ເປົ້າໝາຍທີ່ສຳຄັນຂອງການສົ່ງເສີມ ກະສິກຳ ແລະປ່າໄມ້ ແມ່ນເພື່ອເຮັດໃຫ້ແບບແຜນການຜະລິດຂອງຊາວກະສິກອນໄດ້ຮັບການພັດທະນາປັບປຸງໄປສູ່ທິດທາງການຜະລິດທີ່ມີປະສິດທິຜົນ ໂດຍການນຳໃຊ້ຊັບພະຍາກອນທີ່ມີຢູ່ຢ່າງຄຸ້ມຄ່າ, ຢາກເຮັດໄດ້ແນວນັ້ນມີຄວາມຈຳເປັນໄດ້ຫັນປ່ຽນທັດສະນະ ແລະແບບແຜນການຜະລິດທີ່ມີລັກສະນະຄອງເດີມເຮັດຕາມຄວາມຊິ້ນເຄີຍຕາມບູຮານນະການໃຫ້ກາຍເປັນການນຳໃຊ້ເຕັກນິກວິທະຍາການທີ່ເໝາະສົມ.

ດັ່ງນັ້ນ, ການສ້າງລະບົບຕາໜ່າງສົ່ງເສີມຂັ້ນບ້ານຈຶ່ງມີຄວາມສຳຄັນຢ່າງຍິ່ງ.

## I. ຈຸດປະສົງ / ຄາດໝາຍ

ເພື່ອໃຫ້ເຂົ້າໃຈ ແລະເຫັນໄດ້ຄວາມໝາຍຄວາມສຳຄັນຂອງລະບົບການສົ່ງເສີມຂັ້ນບ້ານ, ທັງນີ້ອີງໃສ່ ນະໂຍບາຍໃນການພັດທະນາເສດຖະກິດສັງຄົມຂອງພັກ ແລະລັດຖະບານໄດ້ກຳນົດອອກຢ່າງຈະແຈ້ງແລ້ວວ່າໃຫ້ບ້ານ ເປັນຫົວໜ່ວຍຈັດຕັ້ງປະຕິບັດທຸກກິດຈະກຳການພັດທະນາຂອງບ້ານ. ດັ່ງນັ້ນ, ການສ້າງໃຫ້ບ້ານມີ ຕາໜ່າງລະບົບການສົ່ງເສີມຂັ້ນບ້ານ ການສົ່ງເສີມ ທີ່ສາມາດເຄື່ອນໄຫວເອົາເອງໄດ້ນັ້ນ ຈຶ່ງເປັນຄວາມຈຳເປັນພາວະວິໃສ ໃນວຽກງານການສົ່ງເສີມກະສິກຳ ແລະປ່າໄມ້ ພວກເຮົາ.

## II.ຄວາມສຳຄັນຂອງການມີຕາໜ່າງການສົ່ງເສີມຂັ້ນບ້ານ

### 1. ລະບົບການສົ່ງເສີມຂັ້ນບ້ານ (VES)

ແມ່ນຮູບແບບການຈັດຕັ້ງວຽກ ການສົ່ງເສີມກະສິກຳ ຢ່າງນຶ່ງທີ່ສາມາດເຄື່ອນໄຫວໄດ້ພາຍໄຕ້ການເປັນເຈົ້າການ ໃນການຄຸ້ມຄອງຂອງອຳນາດການປົກຄອງຂັ້ນບ້ານເປັນພື້ນຖານ.

### 2. ຕາໜ່າງການສົ່ງເສີມລະດັບບ້ານ : ປະກອບດ້ວຍ

- ວິຊາການບ້ານທີ່ເຂັ້ມແຂງ
- ກຸ່ມຜູ້ຜະລິດທີ່ເຂັ້ມແຂງ
- ກອງທຶນ: ອາດເປັນກອງທຶນຂອງກຸ່ມການຜະລິດເອງ ຫຼືກອງທຶນພັດທະນາຂອງບ້ານເພື່ອຕອບສະໜອງ ແລະເປັນແຮງຈູງໃຈໃນການປະຕິບັດໜ້າທີ່ກະຈາຍຄວາມຮູ້ ຄວາມສາມາດ ປະສົບການຂອງວິຊາການບ້ານ ໄປສູ່ຄອບຄົວ ຫຼືກຸ່ມຜະລິດໃໝ່. ທັງນັ້ນ ທັງນີ້ກໍ່ຂຶ້ນກັບການຕັດສິນໃຈຕົກລົງຂອງກຸ່ມ ແລະອຳນາດການປົກຄອງເອງ.
- ການຜະລິດທີ່ມີປະສິດທິຜົນ

### ຫຼັກການລວມຂອງການສ້າງ ລະບົບການສົ່ງເສີມຂັ້ນບ້ານ

1. ຕ້ອງສ້າງໃຫ້ເປັນໂຄງການຮຽນຮູ້ (Production Group) ຢ່າງຄົບວົງຈອນ
2. ຕ້ອງມີຜົນງານພົ້ນເດັ່ນຈາກການຮຽນຮູ້ເພື່ອຊຸກຍູ້ ຮັບຮອງໃຫ້ເກີດມີວິຊາການບ້ານໃນດ້ານນັ້ນໆ
3. ຖ້າມີຜູ້ສົນໃຈຢາກຮຽນຮູ້, ການກະຈາຍຄວາມຮູ້ ຄວາມສາມາດຕ້ອງແມ່ນໜ້າທີ່ຂອງວິຊາການບ້ານເລົ່ານັ້ນ
4. ການໃຫ້ຄວາມຮູ້, ເຕັກນິກເລື່ອງໃໝ່ ຂອງກຸ່ມຜະລິດເກົ່າ ຍັງແມ່ນໜ້າ ທີ່ຂອງນັກສົ່ງເສີມ ແຕ່ຕ້ອງຜ່ານການເຮັດວຽກກັບວິຊາການຂັ້ນບ້ານ
5. ອຳນາດການປົກຄອງບ້ານຕ້ອງຖືການສ້າງເສນາທິການ(ເປັນເຈົ້າ ການ) ດ້ານການຜະລິດກະສິກຳອັນປະກອບມີວິຊາການບ້ານເປັນພາລະກິດຢ່າງໜຶ່ງທີ່ສຳຄັນ
6. ການສັນຫາ ຄຸ້ມຄອງຊັບພະຍາກອນ (ງົບປະມານ) ເພື່ອຊຸກຍູ້ໃຫ້ຕາໜ່າງການສົ່ງເສີມບ້ານໄດ້ເຄື່ອນໄຫວ ແມ່ນເປັນໜ້າທີ່ຄວາມຮັບຜິດຊອບຂອງອຳນາດການປົກຄອງບ້ານ.



## III. ຄະບວນການຮຽນຮູ້

### ການຈັດຕັ້ງປະຕິບັດແຕ່ລະຂັ້ນຕອນ

ໃນການສ້າງຂະບວນການຮຽນຮູ້ຂອງລະບົບການສົ່ງເສີມຂັ້ນບ້ານ ຈະບໍ່ຈຳແນກເພດ, ໄວ ບໍ່ວ່າຍິງ_ຊາຍ ມີສິດເຂົ້າຮ່ວມຂະບວນການຮຽນຮູ້ໄດ້ໂດຍມີຂັ້ນຕອນລຸ່ມນີ້:

- ຊອກຫາຄວາມຕ້ອງການຂອງຊາວບ້ານທີ່ຢາກປັບປຸງວິທີການຜະລິດຂອງຕົນໃຫ້ດີຂຶ້ນ ໂດຍຜ່ານການສ້າງເປັນກຸ່ມຜະລິດແລະວິຊາການບ້ານ
- ຊາວກະສິກອນຕ້ອງໄດ້ຮັບການຝຶກອົບຮົມ ແລະຮຽນຮູ້ຫຼັກວິຊາການຕ່າງໆ ຕາມຄວາມຕ້ອງການຕົວຈິງ
- ຕະຫຼອດໄລຍະການຈັດຕັ້ງປະຕິບັດຕ້ອງມີການຕິດຕາມ_ຊຸກຍູ້ ແລະປະເມີນຜົນ ທີ່ໄດ້ຮັບ ແລະຂໍ້ຄົງຄ້າງ
- ຜົນຂອງການຮຽນຮູ້ທີ່ພົ້ນເດັ່ນຕ້ອງໄດ້ຮັບຄວາມສົນໃຈຈາກຊາວບ້ານຜູ້ອື່ນໆໂດຍຜ່ານຂະບວນການແລກປ່ຽນບົດຮຽນ ຊຶ່ງກັນ ແລະກັນລະຫວ່າງຊາວບ້ານດ້ວຍກັນ, ກຸ່ມຕໍ່ກຸ່ມ, ບ້ານຕໍ່ບ້ານ

## IV. ກົນໄກການຈັດຕັ້ງຄຸ້ມຄອງ

### ຜູ້ທີ່ມີສ່ວນຮັບຜິດຊອບ ແລະໜ້າທີ່ສຳຄັນ

ການຈັດຕັ້ງຄຸ້ມຄອງ ຂອງລະບົບການສົ່ງເສີມຂັ້ນບ້ານ ປະກອບດ້ວຍຜູ້ມີສ່ວນຮ່ວມຢູ່ໃນການຈັດຕັ້ງຂອງບ້ານ ແລະມີບົດບາດສຳຄັນໃນການດຳເນີນກິດຈະກຳຕ່າງໆ ພາຍໃນບ້ານມີດັ່ງນີ້:

**1. ພະນັກງານເມືອງ**

- ເປັນຜູ້ປະສານສົມທົບກັບທີມງານແຂວງ, ສູນກາງ ແລະອຳ ນາດການປົກຄອງບ້ານ
- ເກັບກຳຂໍ້ມູນພາຍໃນບ້ານເພື່ອນຳມາວິເຄາະ
- ຈັດຕັ້ງການຝຶກອົບຮົມໃຫ້ກຸ່ມເປົ້າໝາຍ
- ລົງຕິດຕາມຫຼັງການຝຶກ
- ຂະຫຍາຍຜົນຂອງການຝຶກອົບຮົມທີ່ພົ້ນເດັ່ນພາຍໃນບ້ານ

**2. ອຳນາດການປົກຄອງບ້ານ ແລະສາຍຕັ້ງທີ່ກ່ຽວຂ້ອງ**

- ເອື້ອອຳນວຍໃນການເຄື່ອນໄຫວຂອງພະນັກເມືອງ ແລະກຸ່ມຜູ້ຜະລິດ
- ເຕົ້າໂຮມສະມາຊິກຮ່ວມກັບເມືອງ
- ສ້າງລະບຽບການພາຍໃນກຸ່ມ
- ອຳນວຍການຂອງບ້ານຮັບຜິດຊອບເພື່ອດຳເນີນລະບົບການສົ່ງເສີມຂອງບ້ານ

**3. ວິຊາການບ້ານ**

- ມີໜ້າທີ່ຜັນຂະຫຍາຍບົດຮຽນໃຫ້ຊາວກະສິກອນ ແລະກຸ່ມເອງ
- ຕິດຕາມລາຍງານຜົນດີ_ອ່ອນ ແລະອື່ນໆ

**4. ກຸ່ມຜູ້ຜະລິດ**

- ເຂົ້າຮ່ວມການຝຶກອົບຮົມ, ນຳໃຊ້ບົດຮຽນ (ຜັນຂະຫຍາຍບົດຮຽນໄປສູ່ພາກປະຕິບັດຕົວຈິງ




Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.
Tel/Fax: 021—732 162
Email: leap@laotel.com


ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກວິຊາການ

# ລະບົບການສົ່ງເສີມຂັ້ນບ້ານ

## Village Extension System " VES "




ຈັດຕັ້ງປະຕິບັດໂດຍ : CETDU

(ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ)

ຮ່ວມກັບ:

ໂຄງການ ສົ່ງເສີມ ກະສິກຳ (LEAP)